ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ — ເລກທີ: 083 /ຈນວ
ລົງວັນທີ: 28 ກຸມພາ 2021

# ຂໍ້ຕົກລົງ
## ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບກະກຽມບັນດາເງື່ອນໄຂ, ຂໍ້ກຳນົດ ແລະ ລະບຽບການ ໃນການປະມູນການເຊົ່າກິດຈະການ " ສວນສີໂຄດຕະບອງ " ຢູ່ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ

- ອີງຕາມ ມາດຕາ 19, 20 ໝວດທີ IV ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ) ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ມະຕິກອງປະຊຸມຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນນະຄອນຫຼວງວຽງຈັນ (ຄລທ.ນວ) ຄັ້ງທີ 43, ສະບັບເລກທີ 12/ຄລທ.ນວ, ລົງວັນທີ 19 ພະຈິກ 2020;
- ອີງຕາມ ບົດບັນທຶກກອງປະຊຸມ ກ່ຽວກັບການກຳນົດເງື່ອນໄຂ ແລະ ລະບຽບການໃນການປະມູນການເຊົ່າບໍລິການຂອງໂຄງການພັດທະນາສວນສີໂຄດຕະບອງ ໃນວັນທີ 24 ທັນວາ 2020;
- ອີງຕາມ ບົດລາຍງານ ຂອງພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ສະບັບເລກທີ 124/ພຜທ.ຫລປ.ນວ, ລົງວັນທີ 03 ກຸມພາ 2021.

## ເຈົ້າຄອງນະຄອນຫຼວງວຽງຈັນ ຕົກລົງ:

**ມາດຕາ 1** ແຕ່ງຕັ້ງຄະນະຮັບຜິດຊອບກະກຽມບັນດາເງື່ອນໄຂ, ຂໍ້ກຳນົດ ແລະ ລະບຽບການໃນການປະມູນການເຊົ່າກິດຈະການ " ສວນສີໂຄດຕະບອງ " ຢູ່ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ເຊິ່ງປະກອບດ້ວຍບັນດາທ່ານ ດັ່ງນີ້:

| | | |
|---|---|---|
| 1. ທ່ານ ສີວິລາດທົງສິນ ທອງເພັງ | ຫົວໜ້າພະແນກການເງິນ ນະຄອນຫຼວງວຽງຈັນ | ເປັນຫົວໜ້າ; |
| 2. ທ່ານ ບຸນຈັນ ແກ້ວສີທຳມະ | ຫົວໜ້າຫ້ອງການຄຸ້ມຄອງ-ບໍລິການຕົວເມືອງວຽງຈັນ | ເປັນຮອງ; |
| 3. ທ່ານ ສິນລະປະກອນ ພົມມະໄຊສີ | ຮອງຫົວໜ້າພະແນກແຜນການ-ການລົງທຶນ ນວ | ເປັນຮອງ; |
| 4. ທ່ານ ອິນປອງ ທຸມມາ | ຮັກສາການ ເຈົ້າເມືອງສີໂຄດຕະບອງ | ເປັນຄະນະ; |
| 5. ທ່ານ ສອນໄຊ ສີສົມພັນ | ຮອງຫົວໜ້າຫ້ອງວ່າການ ນວ | ເປັນຄະນະ; |
| 6. ທ່ານ ປອ. ແອງພອນ ແພງສຸວັນ | ຮອງຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນວ | ເປັນຄະນະ; |
| 7. ທ່ານ ຈັນສະຫວ່າງ ທີມມະພັນ | ຮອງປະທານອົງການກວດກາລັດ ນວ | ເປັນຄະນະ; |



Scanned with CamScanner

8. ທ່ານ ສີວອນ ຊຸບທະວີ ຮອງຫົວໜ້າພະແນກໂຍທາທິການ-ຂົນສົ່ງ ນວ ເປັນຄະນະ.

- ສິດ ແລະ ໜ້າທີ່ ຂອງຄະນະ ມີດັ່ງນີ້:

- ກະກຽມຮ່າງຂໍ້ກຳນົດ, ເງື່ອນໄຂ ແລະ ສະຫຼຸບການປະມູນການເຊົ່າບໍລິການ ຂອງໂຄງການພັດທະນາສວນສີໂຄດຕະບອງ ຢູ່ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ໃຫ້ມີຜົນສຳເລັດເປັນຢ່າງດີ;
- ຄົ້ນຄວ້ານຳສະເໜີນິຕິກຳຕ່າງໆທີ່ຕິດພັນກັບການປະມູນ ແລະ ແກ້ໄຂບັນຫາຂອງໂຄງການສວນສີໂຄດຕະບອງ;
- ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ອົງການປົກຄອງນະຄອນ ຫຼວງວຽງຈັນຮັບຊາບເປັນແຕ່ລະໄລຍະ;
- ສາມາດແຕ່ງຕັ້ງຄະນະກຳມະການເລຂາເພີ່ມເຕີມ ຈາກຂະແໜງການທີ່ກ່ຽວຂ້ອງຕາມຄວາມຈຳເປັນ ແລະ ເໝາະສົມຂອງໜ້າວຽກ;
- ເປີດກວ້າງໃຫ້ບັນດາບໍລິສັດເຂົ້າຮ່ວມປະມູນນຳ ດ້ວຍການເຜີຍແຜ່ອອກສື່ສິ່ງພິມຕ່າງໆ ເພື່ອໃຫ້ສາທາລະຊົນໄດ້ຮັບຮູ້ ແລະ ຮັບຊາບ;
- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

ມາດຕາ 2 ຫ້ອງວ່າການ, ພະແນກການເງິນ, ພະແນກແຜນການ-ການລົງທຶນ, ພະແນກຊັບພະຍາກອນທຳມະຊາດ-ສິ່ງແວດລ້ອມ, ພະແນກໂຍທາທິການ-ຂົນສົ່ງ, ອົງການກວດກາລັດ ນະຄອນຫຼວງວຽງຈັນ, ຫ້ອງການຄຸ້ມຄອງ-ບໍລິການຕົວເມືອງວຽງຈັນ, ເມືອງສີໂຄດຕະບອງ, ທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ບັນດາທ່ານທີ່ຖືກແຕ່ງຕັ້ງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 3 ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າຄອງນະຄອນຫຼວງວຽງຈັນ

ປອ.ສິນລະວົງ ຄຸດໄພທູນ

ບ່ອນສົ່ງ:

- ເຈົ້າຄອງ-ຮອງເຈົ້າຄອງ ນວ ທ່ານລະ 01 ສະບັບ;
- ອົງການກວດກາລັດ ນວ 01 ສະບັບ;
- ພະແນກການເງິນ ນວ 01 ສະບັບ;
- ພະແນກແຜນການ-ການລົງທຶນ ນວ 01 ສະບັບ;
- ພະແນກຊັບພະຍາກອນທຳມະຊາດ-ສິ່ງແວດລ້ອມ ນວ 01 ສະບັບ;
- ພະແນກໂຍທາທິການ-ຂົນສົ່ງ ນວ 01 ສະບັບ;
- ຫ້ອງການຄຸ້ມຄອງ-ບໍລິການຕົວເມືອງວຽງຈັນ 01 ສະບັບ;
- ເມືອງສີໂຄດຕະບອງ 01 ສະບັບ;
- ບັນດາທ່ານທີ່ຖືກແຕ່ງຕັ້ງ ທ່ານລະ 01 ສະບັບ;
- ເກັບມ້ຽນສຳເນົາ 02 ສະບັບ.

Scanned with CamScanner